ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ເລກທີ 4358 /ຮສສ

ນະຄອນຫຼວງວຽງຈັນ,ວັນທີ 22 ທັນວາ 2020

# ຂໍ້ຕົກລົງ

## ວ່າດ້ວຍ ໂຄງສ້າງມາດຕະຖານສີມືແຮງງານແຫ່ງຊາດ

- **ອີງຕາມ** ກົດໝາຍວ່າດ້ວຍແຮງງານສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013;
- **ອີງຕາມ** ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 200/ນຍ, ລົງວັນທີ 30 ມິຖຸນາ 2017;
- **ອີງຕາມ** ດຳລັດ ວ່າດ້ວຍການສ້າງ ແລະ ພັດທະນາສີມືແຮງງານ ສະບັບເລກທີ 036/ນຍ, ລົງວັນທີ 22 ມັງກອນ 2010.

**ລັດຖະມົນຕີ ຕົກລົງ:**

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດໂຄງສ້າງ, ຈຸດປະສົງ ແລະ ຂອບເຂດ ການນຳໃຊ້ ໂຄງສ້າງມາດຕະຖານສີມືແຮງງານແຫ່ງຊາດ ເພື່ອ ເປັນບ່ອນອີງໃນການຄົ້ນຄວ້າ ແລະ ສ້າງມາດຕະຖານສີມືແຮງງານແຫ່ງຊາດ ໃນສາຂາອາຊີບຕ່າງໆ ທັງ ຊ່ວຍຕິດຕາມ, ການກວດກາ ແລະ ປະເມີນຜົນການຜັນຂະຫຍາຍມາດຕະຖານສີມືແຮງງານແຫ່ງຊາດ ເຂົ້າໃນການພັດທະນາ ແລະ ປັບປຸງຫຼັກສູດ , ແຜນການຝຶກ ແລະ ການທົດສອບສີມືແຮງງານ ເພື່ອ ຍົກລະດັບຄຸນນະພາບຂອງການພັດທະນາສີມືແຮງງານ,ຮັບປະກັນແຜນການຝຶກສີມືແຮງງານ, ຍົກສູງຜະລິດຕະພາບ ແລະ ຊ່ວຍສ້າງໂອກາດມີວຽກເຮັດງານທຳ ຕາມຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

**ມາດຕາ 2 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະການສ້າງມາດຕະຖານສີມືແຮງງານແຫ່ງຊາດ.

**ມາດຕາ 3 ໂຄງສ້າງມາດຕະຖານສີມືແຮງງານ**

1. ຊື່ສາຂາອາຊີບ
2. ຄຳນິຍາມ
   - ສາຂາອາຊີບ
   - ຜູ້ປະກອບອາຊີບ
3. ລະດັບສີມືແຮງງານ

4. ຂະບວນການຂອງໜ້າວຽກ
5. ໜ້າວຽກ
   ກ. ຄວາມໝາຍ
   ຂ. ອົງປະກອບ
      ▪ ອົງປະກອບທີ່ນອນໃນໜ້າວຽກ
      ▪ ມາດຕະຖານການປະຕິບັດວຽກ
   ຄ. ຂອບເຂດຂອງໜ້າວຽກ
      ▪ ຂອບເຂດການນຳໃຊ້
      ▪ ເຄື່ອງມື ແລະ ອຸປະກອນ
      ▪ ວັດສະດຸ ແລະ ເອກະສານ
      ▪ ຄວາມຮູ້, ທັກສະ ແລະ ຄຸນສົມບັດ
   ງ. ຂໍ້ແນະນຳທີ່ເປັນຫຼັກຖານ
      - ເງື່ອນໄຂຄຸນນະພາບ
      - ສິ່ງທີ່ຜູ້ປະເມີນຕ້ອງເອົາໃຈໃສ່
      - ວິທີປະເມີນຜົນການທົດສອບ
   ຈ. ລາຍການໜ້າວຽກ
6. ແຜນການຝຶກອົບຮົມ
7. ມາດຕະຖານການທົດສອບ(ພາກທິດສະດີ)
8. ມາດຕະຖານການທົດສອບ(ພາກປະຕິບັດ)

**ມາດຕາ 4** ມອບໃຫ້ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ສ້າງປຶ້ມແນະນຳ ແລະ ກົນໄກກ່ຽວກັບ ການຄົ້ນຄວ້າ, ສ້າງ ແລະ ຜັນຂະຫຍາຍມາດຕະຖານສີມືແຮງງານແຫ່ງຊາດ ໃຫ້ສອດຄ່ອງກັບໂຄງສ້າງມາດຕະຖານສີມືແຮງງານແຫ່ງຊາດ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ທັງຈັດຕັ້ງການເຜີຍແຜ່ ແລະ ແນະນຳ ພາກສ່ວນກ່ຽວຂ້ອງ ເພື່ອຄວາມເປັນເອກະພາບ ແລະ ຮັບປະກັນຜົນໄດ້ຮັບຕາມຈຸດປະສົງ ແລະ ລະດັບຄາດໝາຍ.

**ມາດຕາ 5** ຫ້ອງການກະຊວງ, ກົມພັດທະນາສີມືແຮງງານ ແລະ ຈັດຫາງານ, ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງ, ສະຖານພັດທະນາສີມືແຮງງານ, ຫົວໜ່ວຍແຮງງານ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 6** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ປອ. ຄຳແພງ ໄຊສົມແພງ